ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ເລກທີ 4015 ກສລ
ນະຄອນຫລວງວຽງຈັນ, ວັນທີ 14 ພະຈິກ 2023

# ຫນັງສືແຈ້ງເຊີນປະມູນ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຍື່ນຊອງປະມູນ ສໍາລັບການ ປັບປຸງ, ສ້ອມແປງ ແລະ ປ່ຽນຖ່າຍ ອາຄານກຽດຕິຍົດ VVIP ຢູ່ສະໜາມບິນສາກົນວັດໄຕ ໄລຍະການປະຕິບັດວຽກແມ່ນ 03 ເດືອນ;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາ ກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດໍາເນີນທຸລະກິດ ຖືກຕ້ອງຕາມກົດຫມາຍ ທີ່ກ່ຽວພັນກັບການກໍ່ສ້າງດັ່ງກ່າວ;
4. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດ ຊອບ: ທ່ານ ຈັນມະນີ ຄູນໄຊຍະບົວສີ ໂທລະສັບ: 020 55686696 ແລະ ທ່ານ ໄຊຍະສອນ ອິນທະ ເກສອນ ໂທລະສັບ: 020 23222765 ໃນເວລາລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເຫນີຫາ ທີ່ຢູ່ຂ້າງລຸ່ມ ນີ້, ເລີ່ມແຕ່ວັນທີ 15 ພະຈິກ 2023 ເປັນຕົ້ນໄປ, ໃນລາຄາ 5.000.000 ກີບ ຫລື ເປັນສະກຸນເງິນອື່ນ ທຽບເທົ່າ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາ 14:00 ນາທີ ຂອງວັນທີ 07 ທັນວາ 2023 ທີ່ ຫ້ອງປະຊຸມເບີ 01 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆ ຊອງຈະໄດ້ເປີດໃນເວລາ 14:10 ນາທີ ຂອງ ວັນທີ ແລະ ສະຖານທີ່ຮັບຊອງປະມູນ ໂດຍຊ້ອງຫນ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ ປະມູນທີ່ສົນໃຈເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ ມີຫນັງສືຄໍ້າປະກັນການປະມູນດ້ວຍກຽດ ຫລື ຫນັງສືຄໍ້າປະກັນການປະມູນ ຈາກທະນາຄານ ຢ່າງຫນ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542. ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ເຊັນແທນ ຫົວໜ້າກອງ
ຮອງຫົວໜ້າກອງ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ຄອນຄໍາ ສຸວົງສາ